ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ

ເລກທີ 01 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການເລືອກຕັ້ງປະທານ, ຮອງປະທານ ແລະ ຄະນະປະຈຳສະພາແຫ່ງຊາດ ຊຸດທີ VII

---

ອີງຕາມມາດຕາ 53 ຂໍ້ 5 ຂອງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມາດຕາ 8 ແລະມາດຕາ 14 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ;

ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ VII ໃນວາລະປະຊຸມຕອນເຊົ້າ ວັນພຸດ, ທີ 15 ມິຖຸນາ 2011;

ຕົກລົງ :

<u>ມາດຕາ 1</u>. ເລືອກຕັ້ງເອົາທ່ານ ນາງ ປານີ ຢາທໍ່ຕູ້, ເປັນປະທານສະພາແຫ່ງຊາດ ຊຸດທີ VII ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

<u>ມາດຕາ 2</u>. ເລືອກຕັ້ງເອົາຮອງປະທານສະພາແຫ່ງຊາດ ຊຸດທີ VII ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ ຊຶ່ງປະກອບດ້ວຍບັນດາທ່ານດັ່ງນີ້:

1. ທ່ານ ດຣ.ໄຊສົມພອນ ພົມວິຫານ ເປັນຮອງປະທານສະພາແຫ່ງຊາດ
2. ທ່ານ ສົມພັນ ແພງຄຳມີ ເປັນຮອງປະທານສະພາແຫ່ງຊາດ

<u>ມາດຕາ 3</u>. ເລືອກຕັ້ງເອົາຄະນະປະຈຳສະພາແຫ່ງຊາດ ຊຸດທີ VII ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ ຊຶ່ງປະກອບດ້ວຍບັນດາທ່ານດັ່ງນີ້:

| | |
|---|---|
| 1. ທ່ານ ນາງ ປານີ ຢາທໍ່ຕູ້ | ເປັນປະທານສະພາແຫ່ງຊາດ |
| 2. ທ່ານ ດຣ.ໄຊສົມພອນ ພົມວິຫານ | ເປັນຮອງປະທານສະພາແຫ່ງຊາດ |
| 3. ທ່ານ ສົມພັນ ແພງຄຳມີ | ເປັນຮອງປະທານສະພາແຫ່ງຊາດ |
| 4. ທ່ານ ດວງດີ ອຸດທະຈັກ | ເປັນກຳມະການຄະນະປະຈຳສະພາແຫ່ງຊາດ |
| 5. ທ່ານ ສຈ.ດາວອນ ຫວ່າງວິຈິດ | ເປັນກຳມະການຄະນະປະຈຳສະພາແຫ່ງຊາດ |
| 6. ທ່ານ ດຣ.ກຸແກ້ວ ອັກຄະມົນຕີ | ເປັນກຳມະການຄະນະປະຈຳສະພາແຫ່ງຊາດ |
| 7.ທ່ານ ດຣ.ນາງ ສຸວັນເພັງ ບຸບຜານຸວົງ | ເປັນກຳມະການຄະນະປະຈຳສະພາແຫ່ງຊາດ |
| 8. ທ່ານ ສຈ.ດຣ. ພອນເທບ ພົນເສນາ | ເປັນກຳມະການຄະນະປະຈຳສະພາແຫ່ງຊາດ |
| 9. ທ່ານ ພົນຈັດຕະວາ ວິໄລ ດວງມະນີ | ເປັນກຳມະການຄະນະປະຈຳສະພາແຫ່ງຊາດ |
| 10. ທ່ານ ດຣ.ອຸ່ນແກ້ວ ວຸທິລາດ | ເປັນກຳມະການຄະນະປະຈຳສະພາແຫ່ງຊາດ |

ມາດຕາ 4. ບັນດາການຈັດຕັ້ງຂອງພັກ-ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດມະຕິຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 5. ມະຕິຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 16 ມິຖຸນາ 2011

ປະທານສະພາແຫ່ງຊາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານສະພາແຫ່ງຊາດ

**ປານີ ຢາທໍ່ຕູ້**